# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ນາຍົກລັດຖະມົນຕີ** ເລກທີ. .206. / ນຍ

# ດຳລັດ

## ວ່າດ້ວຍ ທຸລະກິດຈຳໜ່າຍສິນຄ້າ

- ອີງຕາມກົດໝາຍວ່າດ້ວຍລັດຖະບານສະບັບເລກທີ 01/95, ລົງວັນທີ 8 ມີນາ 1995;
- ອີງຕາມ ກົດໝາຍ ວ່າດ້ວຍ ທຸລະກິດ ສະບັບເລກທີ 03/94/ສພຊ, ລົງວັນທີ 18 ກໍລະກົດ 1994;
- ອີງຕາມກົດໝາຍສ່ວຍສາອາກອນ ສະບັບເລກທີ 04/95/ສພຊ, ລົງວັນທີ 14 ຕຸລາ 1995;
- ອີງຕາມການສະເໜີ ຂອງລັດຖະມົນຕີ ວ່າການ ກະຊວງການຄ້າສະບັບເລກທີ 1165/ກຄ.ຫກ, ລົງວັນທີ 09 ຕຸລາ 2001;
- ອີງຕາມມະຕິຕົກລົງຂອງກອງປະຊຸມລັດຖະບານ ຄັ້ງວັນທີ 25 ທັນວາ 2000.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ໜ້າທີ່ຂອງ ດຳລັດ**

ດຳລັດສະບັບນີ້ມີໜ້າທີ່ ກຳນົດລະບຽບການຄຸ້ມຄອງ ທຸລະກິດຈຳໜ່າຍສິນຄ້າຢູ່ພາຍໃນ ໃຫ້ເຂົ້າສູ່ລະບຽບກົດໝາຍ, ແນໃສ່ເຮັດໃຫ້ການຈະລາຈອນສິນຄ້າທົ່ວເຖິງ, ຊຸກຍູ້ການຜະລິດ, ປົກປ້ອງຜູ້ຊົມໃຊ້, ເຮັດໃຫ້ລາຄາສິນຄ້າ ແລະ ເງິນຕາມີຄວາມສະຫງົບໝັ້ນທ່ຽງ, ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນ, ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາເສດຖະກິດ ສັງຄົມ ຂອງຊາດ.

**ມາດຕາ 2. ທຸລະກິດຈຳໜ່າຍສິນຄ້າ**

ທຸລະກິດຈຳໜ່າຍສິນຄ້າແມ່ນ ທຸລະກິດການຂາຍສິນຄ້າຢູ່ພາຍໃນປະເທດ ຊຶ່ງກວມເອົາການຂາຍເທື່ອທີໜຶ່ງ ສິນຄ້າທີ່ຜະລິດຢູ່ພາຍໃນປະເທດ ຫຼື ສິນຄ້າທີ່ນຳເຂົ້າຈາກຕ່າງປະເທດ ໄປເຖິງການຂາຍເທື່ອສຸດທ້າຍ ໃຫ້ຜູ້ຊົມໃຊ້ ໂດຍບໍ່ຈຳແນກວ່າ ຈະເປັນການຂາຍຍົກ ຫຼື ການຂາຍຍ່ອຍ.

ການຂາຍເທື່ອທີຫນຶ່ງ ແມ່ນການໂອນກຳມະສິດ ສິນຄ້າເທື່ອທີຫນຶ່ງໃຫ້ແກ່ບຸກຄົນ ຫລື ນິຕິບຸກຄົນໃດຫນຶ່ງຈາກຜູ້ຜະລິດ ພາຍໃນປະເທດ ຫຼື ຜູ້ດຳເນີນທຸລະກິດ ການຄ້າ ຂາເຂົ້າ ໂດຍໄດ້ຮັບຄ່າຕອບແທນເປັນເງິນ ຫລື ຜົນປະໂຫຍດຢ່າງອື່ນ.

**ມາດຕາ 3. ຫລັກການພື້ນຖານຂອງການຈັດຕັ້ງ ແລະ ການເຄື່ອນໄຫວ**

ທຸກການຈັດຕັ້ງ ແລະ ການເຄື່ອນໄຫວທຸລະກິດຈຳຫນ່າຍສິນຄ້າ ຕ້ອງປະຕິບັດຢ່າງເຂັ້ມງວດຕາມດຳລັດ ສະບັບນີ້ ແລະ ລະບຽບກົດຫມາຍອື່ນທີ່ກ່ຽວຂ້ອງ.

## ຫມວດ ທີ II
## ການຄຸ້ມຄອງສິນຄ້າມີເງື່ອນໄຂ

**ມາດຕາ 4. ການຄຸ້ມຄອງການຈຳຫນ່າຍສິນຄ້າມີເງື່ອນໄຂ**

ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ ສົ່ງເສີມການຈະລາຈອນຈຳຫນ່າຍທຸກປະເພດສິນຄ້າ ຢ່າງເສລີຖືກກົດຫມາຍ, ເວັ້ນເສັຍແຕ່ປະເພດສິນຄ້າ ທີ່ລັດກຳນົດເງື່ອນໄຂເພື່ອດຳເນີນທຸລະກິດຈຳຫນ່າຍ ຕາມດຳລັດສະບັບນີ້ ຫລື ຕາມລະບຽບກົດຫມາຍອື່ນທີ່ກ່ຽວຂ້ອງ.

ການຄຸ້ມຄອງ ການຈຳຫນ່າຍສິນຄ້າມີເງື່ອນໄຂ ແມ່ນ ການກຳນົດເງື່ອນໄຂ ສຳລັບການດຳເນີນທຸລະກິດຈຳຫນ່າຍສິນຄ້າ ຕໍ່ສິນຄ້າໃດຫນຶ່ງ ຕາມລັກສະນະ, ຈຸດພິເສດ, ຄວາມສຳຄັນ, ຜົນກະທົບ, ຄວາມສ່ຽງ ຫລື ຄວາມອັນຕະລາຍ ຂອງສິນຄ້າ.

**ມາດຕາ 5. ມາດຕະການຄຸ້ມຄອງສິນຄ້າມີເງື່ອນໄຂ**

ສິນຄ້າມີເງື່ອນໄຂ ອາດຖືກຄຸ້ມຄອງ ດ້ວຍມາດຕະການໃດຫນຶ່ງ ລຸ່ມນີ້ :

- ຫ້າມ ຫລື ຈຳກັດ ການດຳເນີນທຸລະກິດຈຳຫນ່າຍຕໍ່ບາງປະເພດສິນຄ້າ ແລະ ອື່ນໆ ທີ່ເຫັນວ່າ ຈຳເປັນ;
- ກຳນົດທຶນຈົດທະບຽນ ສູງກວ່າທຶນທີ່ກຳນົດໄວ້ໃນກົດຫມາຍວ່າດ້ວຍທຸລະກິດ;
- ກຳນົດເງື່ອນໄຂກ່ຽວກັບທີ່ຕັ້ງ ແລະ ກ່ຽວກັບພື້ນຖານໂຄງລ່າງ ຂອງທຸລະກິດຈຳຫນ່າຍສິນຄ້າ;
- ກຳນົດຄຸນວຸດທິຂອງຜູ້ອຳນວຍການ, ຜູ້ຈັດການ, ເຈົ້າຂອງທຸລະກິດ ຫລື ບຸກຄະລາກອນຂອງຫົວຫນ່ວຍທຸລະກິດ ຈຳຫນ່າຍສິນຄ້າໃດຫນຶ່ງ;
- ກຳນົດມາດຕະຖານ, ຄຸນນະພາບສິນຄ້າ, ເຄື່ອງຫມາຍການຄ້າ, ການບັນຊີ ແລະ ອື່ນໆ;
- ກຳນົດເປົ້າຫມາຍ ທີ່ຈະອະນຸຍາດໃຫ້ດຳເນີນທຸລະກິດ;
- ກຳນົດຂອບເຂດລາຄາ, ການສະສົມສິນຄ້າຕ່ຳສຸດ ຫລື ສູງສຸດ ໃນແຕ່ລະໄລຍະ.

ການກຳນົດ ມາດຕະການ ຕໍ່ການຈຳຫນ່າຍສິນຄ້າມີເງື່ອນໄຂໃດຫນຶ່ງ ຕ້ອງບໍ່ເປັນອຸປະສັກ ຕໍ່ການຂະຫຍາຍຕົວຂອງທຸລະກິດ ດັ່ງກ່າວ ຊຶ່ງອາດມີຜົນກະທົບຫຍໍ້ທໍ່ ການສະຫນອງ, ລາຄາສິນຄ້າ, ສະພາບເງິນຕາ ແລະ ການແຂ່ງຂັນໃນລະດັບທີ່ ສົມເຫດສົມຜົນ.

**ມາດຕາ 6. ສິນຄ້າມີເງື່ອນໄຂ**

ສິນຄ້າມີເງື່ອນໄຂ ແມ່ນສິນຄ້າທີ່ລັດຄຸ້ມຄອງດ້ວຍມາດຕະການໃນມາດຕາ 5 ເທິງນີ້.

ລາຍການສິນຄ້າມີເງື່ອນໄຂ ອາດມີການປ່ຽນແປງຕາມຄວາມຈຳເປັນ ແລະ ຄວາມເໝາະສົມໃນແຕ່ລະໄລຍະ.

ມອບໃຫ້ກະຊວງການຄ້າ ເປັນຜູ້ກຳນົດ ຫລື ຍົກເລີກລາຍການສິນຄ້າມີເງື່ອນໄຂ ແລະ ມາດຕະການ ຄຸ້ມຄອງລະອຽດ ຕໍ່ແຕ່ລະປະເພດສິນຄ້າ ໃນແຕ່ລະໄລຍະ, ເວັ້ນເສັຍແຕ່ປະເພດສິນຄ້າທີ່ຂະແໜງການອື່ນຄຸ້ມຄອງ ແລະ ມີມາດຕະການ ອື່ນແລ້ວ.

### ມາດຕາ 7. ສິນຄ້າມີເງື່ອນໄຂຂອງຂະແໜງການອື່ນ

ສິນຄ້າມີເງື່ອນໄຂຂອງຂະແໜງການອື່ນ ແມ່ນ ສິນຄ້າ ທີ່ຢູ່ໃນຂອບເຂດການຄຸ້ມຄອງໂດຍກົງຂອງບັນດາຂະແໜງການທີ່ກ່ຽວຂ້ອງ. ຜູ້ດຳເນີນທຸລະກິດຈຳໜ່າຍສິນຄ້າ ຕ້ອງປະຕິບັດຕາມ ມາດຕະການຄຸ້ມຄອງ ທີ່ຂະແໜງການດັ່ງກ່າວວາງອອກ.

ປະເພດສິນຄ້າ ມີເງື່ອນໄຂ ແລະ ມາດຕະການຄຸ້ມຄອງ ລະອຽດທີ່ໄດ້ກ່າວ ໃນວັກ 1 ເທິງນີ້ ແມ່ນຂະແໜງການ ທີ່ກ່ຽວຂ້ອງ ເປັນຜູ້ກຳນົດ ແລະ ປະກາດໃຊ້ຕາມຄວາມຈຳເປັນ ແລະ ຄວາມເໝາະສົມ ແລ້ວແຈ້ງບັນຊີສິນຄ້າມີເງື່ອນໄຂເປັນລາຍລັກອັກສອນ ໃຫ້ກະຊວງການຄ້າ ເພື່ອລວບລວມເຂົ້າໃນບັນຊີລາຍການສິນຄ້າ ມີເງື່ອນໄຂຂອງລັດ.

ໃຫ້ກະຊວງການຄ້າແຈ້ງບັນຊີດັ່ງກ່າວນີ້ ໃຫ້ບັນດາຫົວໜ່ວຍທຸລະກິດ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງຊາບ.

### ມາດຕາ 8. ການຈຳໜ່າຍສິນຄ້າເກືອດຫ້າມ

ການດຳເນີນທຸລະກິດຈຳໜ່າຍສິນຄ້າເກືອດຫ້າມ ຈະປະຕິບັດໄດ້ກໍຕໍ່ເມື່ອໄດ້ຮັບອະນຸຍາດຈາກ ກະຊວງການຄ້າ ບົນພື້ນຖານການເຫັນດີຈາກ ນາຍົກລັດຖະມົນຕີ.

ໃນກໍລະນີ ສິນຄ້າເກືອດຫ້າມ ຫາກຢູ່ໃນຂອບເຂດການຄຸ້ມຄອງ ຂອງຂະແໜງການອື່ນໂດຍກົງ, ກະຊວງການຄ້າຕ້ອງ ປະສານສົມທົບ ກັບຂະແໜງການທີ່ກ່ຽວຂ້ອງນັ້ນເສັຍກ່ອນ ແລ້ວຈຶ່ງສະເໜີຂໍຄຳເຫັນດີຈາກ ນາຍົກລັດຖະມົນຕີ.

## ໝວດທີ III
## ການສ້າງຕັ້ງ ແລະ ການເຄື່ອນໄຫວ
## ທຸລະກິດຈຳໜ່າຍສິນຄ້າ

### ມາດຕາ 9. ການສ້າງຕັ້ງ

ບຸກຄົນ ຫລື ນິຕິບຸກຄົນທີ່ມີຈຸດປະສົງສ້າງຕັ້ງ ຫົວໜ່ວຍທຸລະກິດຈຳໜ່າຍສິນຄ້າ ຕ້ອງຍື່ນຄຳຮ້ອງຂໍສ້າງຕັ້ງ ແລະ ຂຶ້ນທະບຽນວິສາຫະກິດນຳ ຂະແໜງການຄ້າ ແລະ ຈົດທະບຽນອາກອນນຳຂະແໜງການເງິນ.

### ມາດຕາ 10. ທຶນຈົດທະບຽນ

ທຶນຈົດທະບຽນ ເພື່ອຂໍສ້າງຕັ້ງ ຫົວໜ່ວຍທຸລະກິດຈຳໜ່າຍສິນຄ້າ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍວ່າດ້ວຍທຸລະກິດ, ເວັ້ນເສັຍແຕ່ການດຳເນີນທຸລະກິດຈຳໜ່າຍສິນຄ້າບາງປະເພດສິນຄ້າທີ່ລະບຽບ ກົດໝາຍ ໄດ້ກຳນົດທຶນຈົດທະບຽນໄວ້ສູງກວ່ານີ້.

**ມາດຕາ 11. ສິນຄ້າທີ່ອະນຸຍາດ ໃນໃບທະບຽນ**

ບຸກຄົນ ຫລື ນິຕິບຸກຄົນທີ່ມີຈຸດປະສົງດຳເນີນທຸລະກິດຈຳໜ່າຍສິນຄ້າ ສາມາດຂໍຂຶ້ນທະບຽນເພື່ອຈຳໜ່າຍສິນຄ້າປະເພດໜຶ່ງ ຫລື ຫລາຍປະເພດກໍໄດ້.

**ມາດຕາ 12. ຮູບການຈັດຕັ້ງທຸລະກິດ**

ຮູບການຈັດຕັ້ງທຸລະກິດຈຳໜ່າຍສິນຄ້າ ອາດຈະຈັດຕັ້ງຕາມປະເພດ, ຮູບການ ແລະ ຮູບແບບທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍທຸລະກິດ.

**ມາດຕາ 13. ຮູບການຈຳໜ່າຍສິນຄ້າ**

ບຸກຄົນ ຫລື ນິຕິບຸກຄົນ ທີ່ໄດ້ຮັບທະບຽນດຳເນີນທຸລະກິດຈຳໜ່າຍສິນຄ້າ ຕາມດຳລັດສະບັບນີ້ ສາມາດເລືອກຮູບການຈຳໜ່າຍສິນຄ້າ ຕາມຄວາມເໝາະສົມຂອງຕົນ, ແຕ່ຕ້ອງປະຕິບັດໃຫ້ສອດຄ່ອງກັບລະບຽບການທີ່ກ່ຽວຂ້ອງ ກັບຮູບການຈຳໜ່າຍສິນຄ້າດັ່ງກ່າວ.

ຮູບການຈຳໜ່າຍສິນຄ້າ ແມ່ນຮູບແບບການຈຳໜ່າຍຢ່າງໃດຢ່າງໜຶ່ງ ຊຶ່ງບັນດາຫົວໜ່ວຍທຸລະກິດຈຳໜ່າຍສິນຄ້ານຳໃຊ້ ເພື່ອຂາຍສິນຄ້າຂອງຕົນເຊັ່ນ: ການຂາຍສິນຄ້າແບບຕົວແທນຈຳໜ່າຍ, ສາຂາຈຳໜ່າຍ, ຮ້ານຄ້າຈຳໜ່າຍ, ຮ້ານສັບພະສິນຄ້າຂະໜາດຕ່າງໆ, ສູນການຄ້າ, ການຂາຍເຄື່ອນທີ່.

**ມາດຕາ 14. ຜົນສະທ້ອນຂອງການບໍ່ເຄື່ອນໄຫວທຸລະກິດ**

ຫົວໜ່ວຍທຸລະກິດຈຳໜ່າຍສິນຄ້າ ທີ່ບໍ່ເຄື່ອນໄຫວທຸລະກິດຕິດຕໍ່ກັນໜຶ່ງປີນັບແຕ່ມື້ໄດ້ຮັບການຂຶ້ນທະບຽນວິສາຫະກິດເປັນຕົ້ນໄປ ຈະເຮັດໃຫ້ທະບຽນວິສາຫະກິດຂອງຫົວໜ່ວຍທຸລະກິດດັ່ງກ່າວຕົກໄປ, ເວັ້ນເສຍແຕ່ໄດ້ແຈ້ງເຫດຜົນ ອັນສົມຄວນໃຫ້ຂະແໜງການຄ້າຊາບກ່ອນກຳນົດເວລາໜຶ່ງປີນັ້ນຈະສິ້ນສຸດລົງ.

## ໝວດທີ IV
## ມາດຕະການ ຕໍ່ຜູ້ລະເມີດ

**ມາດຕາ 15. ການລະເມີດລະບຽບການ ກ່ຽວກັບສິນຄ້າມີເງື່ອນໄຂ**

ບຸກຄົນ ຫລື ນິຕິບຸກຄົນທີ່ໄດ້ລະເມີດລະບຽບການກ່ຽວກັບສິນຄ້າມີເງື່ອນໄຂ ນອກຈາກຈະບໍ່ມີສິດດຳເນີນທຸລະກິດແລ້ວ ຍັງຈະຖືກປັບໃໝ ຫລື ຖືກດຳເນີນຄະດີຕາມກົດໝາຍ.

**ມາດຕາ 16. ການລະເມີດອື່ນໆ**

ທຸກການລະເມີດ ຂອງຜູ້ດຳເນີນທຸລະກິດຈຳໜ່າຍສິນຄ້າ, ເຈົ້າໜ້າທີ່, ພະນັກງານລັດທີ່ກ່ຽວຂ້ອງເຊັ່ນ: ການປອມແປງເອກະສານ, ການສວຍໃຊ້ໜ້າທີ່ຕຳແໜ່ງ ລ້ວນແຕ່ຕ້ອງຮັບຜິດຊອບຕໍ່ໜ້າກົດໝາຍ.

## ໝວດທີ V
## ບົດບັນຍັດ ສຸດທ້າຍ

**ມາດຕາ 17. ການຈັດຕັ້ງປະຕິບັດ**

ສຳນັກງານນາຍົກລັດຖະມົນຕີ, ກະຊວງການຄ້າ, ກະຊວງການເງິນ, ບັນດາກະຊວງ, ອົງການທຽບເທົ່າກະຊວງ, ບັນດາແຂວງ, ກຳແພງນະຄອນ ແລະ ເຂດພິເສດ ມີໜ້າທີ່ຈັດຕັ້ງ ປະຕິບັດດຳລັດສະບັບນີ້ ໃຫ້ປາກົດຜົນເປັນຈິງໃນຂອບເຂດທົ່ວປະເທດ.

**ມາດຕາ 18. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ. ທຸກຂໍ້ກຳນົດ ລະບຽບການທີ່ປະກາດໃຊ້ໃນເມື່ອກ່ອນ ຫາກຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ນະຄອນວຽງຈັນ, ວັນທີ 11-10-2001

**ນາຍົກລັດຖະມົນຕີ,**

**ບຸນຍັງ ວໍລະຈິດ**